ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ບໍລິສັດ ຊີມັງລາວ ມະຫາຊົນ

# LAO CEMENT PUBLIC COMPANY

ບ້ານ ໂພນພະເນົາ ວຽງຈັນ, ສປປລາວ ຕູ້ ປ.ນ 6821, ໂທຣ: ( 865-21 ) 451222,451116 ແຟັກ:451117
PHONPHANAO VIENTIANE, LAO P.D.R. P.O.BOX 6821, TEL : ( 856 - 21 ) 451222,451116 FAX:451117
E-mail:Lcc@laocement.com,www.laocement.com

ເລກທີ 028 /ບຊລ

ນະຄອນຫຼວງວຽງຈັນ, ວັນທີ 23 MAR 2022

**ຮຽນ** : ທ່ານ ຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ທີ່ນັບຖື;

ທ່ານ ຜູ້ອໍານວຍການໃຫ່ຍ ຕະຫຼາດຫຼັກຊັບລາວ ທີ່ນັບຖື;

ທ່ານ ຜູ້ຖືຮຸ້ນ ບໍລິສັດ ຊີມັງລາວ ມະຫາຊົນ ທີ່ນັບຖື,

**ເລື່ອງ** : ແຈ້ງມະຕິທີ່ສໍາຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 1 ປີ 2022

- ອີງຕາມຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ( ສະບັບປັບປຸງ ) ຂອງ ສຄຄຊ ສະບັບ ເລກທີ 04/ສສຄ ລົງວັນທີ 28 ມັງກອນ ປີ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວວ່າດວ້ຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງ ວັນທີ 27 ກັນຍາ 2018.

ບໍລິສັດ ຊີມັງລາວ ມະຫາຊົນ ( ບຊລ ) ຂໍຖືເປັນກຽດແຈ້ງມະຕິທີ່ສໍາຄັນ ຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 01 ປີ 2022 ວັນທີ 23 ມີນາ 2022 ເວລາ 9:00 ໂມງ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້ :

1. ພິຈາລະນາ ແລະ ຮັບຮອງມື້ປິດປຶ້ມວັນທີ 1 ເມສາ 2022 ເພື່ອກໍານົດສິດຜູ້ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ແລະ ກໍານົດເອົາວັນທີ 29 ເມສາ 2022 ເວລາ 09: 00 ໂມງ ເປັນມື້ຈັດກອງປະຊຸມຢູ່ອາຄານຕະຫຼາດ ຫຼັກຊັບລາວ ຊັ້ນ 8
2. ພິຈາລະນາ ແລະ ຮັບຮອງບົດລາຍງານດໍາເນີນທຸລະກິດປະຈໍາປີ 2021 ຂອງບໍລິສັດ.
3. ພິຈາລະນາ ແລະ ຮັບຮອງບົດລາຍງານການເງິນປະຈໍາປີ 2021 ຂອງບໍລິສັດ.
4. ພິຈາລະນາ ແລະ ຮັບຮອງວາລະກອງປະຊຸມຜູ້ຖືຮຸ້ນ ປະຈໍາປີ 2021 ເຊິ່ງມີລາຍລະອຽດດັ່ງນີ້:

   ວາລະທີ 1 : ແຈ້ງຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈໍາປີຜ່ານມາ.

   ວາລະທີ 2 : ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈໍາປີ 2020

   ວາລະທີ 3 : ພິຈາລະນາ ແລະ ຮັບຮອງບົດລາຍງານວຽກງານການດໍາເນີນທຸລະກິດປະຈໍາປີ 2021

   ວາລະທີ 4 : ພິຈາລະນາ ແລະ ຮັບຮອງບົດລາຍງານວຽກງານການເງິນປີ 2021 ແລະ ບໍ່ຈ່າຍເງິນປັນຜົນ ຈາກຜົນການດໍາເນີນທຸລະກິດ ປະຈໍາປີ 2021.

ດັ່ງນັ້ນ, ຈຶ່ງຮຽນມາເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືຢ່າງສູງ.

**ບໍລິສັດ ຊີມັງລາວ ມະຫາຊົນ**

**ປະທານສະພາບໍລິຫານ**




ຢາງຊຸນຢົງ